ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

241-----

ກະຊວງສຶກສາທິການ ແລະ ກິລາ                                        ເລກທີ        /ສສກ
ນະຄອນຫຼວງວຽງຈັນ, ວັນທີ 26 ມັງກອນ 2022

# ຂໍ້ຕົກລົງ
# ວ່າດ້ວຍ ການຄຸ້ມຄອງໂຮງຮຽນສາມັນກິນນອນຊົນເຜົ່າ

- ອີງຕາມ ກົດໝາຍວ່າດ້ວຍການສຶກສາ (ສະບັບປັບປຸງ) ສະບັບເລກທີ 62 /ສພຊ , ລົງວັນທີ 16 ກໍລະກົດ 2015;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 633/ນຍ, ລົງວັນທີ 18 ພະຈິກ 2021;
- ອີງຕາມ ໜັງສືສະເໜີຂອງສູນສົ່ງເສີມການສຶກສາຮຽນຮ່ວມ ສະບັບເລກທີ 028/ສສຮ, ລົງວັນທີ 18 ມັງກອນ 2022.

**ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ຕິດຕາມ ແລະ ກວດກາໂຮງຮຽນສາມັນກິນນອນຊົນເຜົ່າ ໃຫ້ມີຄວາມເປັນລະບຽບຮຽບຮ້ອຍ ແລະ ມີຄວາມເປັນເອກະພາບ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ເຄື່ອນໄຫວວຽກງານດັ່ງກ່າວໃຫ້ມີປະສິດທິພາບ, ປະສິດທິຜົນ, ແນໃສ່ສ້າງເງື່ອນໄຂໃຫ້ນັກຮຽນຊົນເຜົ່າ, ຜູ້ດ້ອຍໂອກາດ ມີຄວາມຮູ້, ຄວາມສາມາດ ແລະ ມີວິຊາຊີບ ກາຍເປັນນັກວິຊາການ, ພະນັກງານສືບທອດ ແລະ ສາມາດປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 2 ການຄຸ້ມຄອງໂຮງຮຽນສາມັນກິນນອນຊົນເຜົ່າ**

ການຄຸ້ມຄອງໂຮງຮຽນສາມັນກິນນອນຊົນເຜົ່າ ແມ່ນການກຳນົດຫຼັກການ, ເງື່ອນໄຂ ແລະ ລະບຽບການ ກ່ຽວກັບ ການສ້າງຕັ້ງ, ການຄັດເລືອກຜູ້ເຂົ້າຮຽນ, ນະໂຍບາຍ ຄູ, ນັກຮຽນ ແລະ ການຄຸ້ມຄອງອາຄານສະຖານທີ່ ເພື່ອຮັບປະກັນ ການຮຽນ-ການສອນ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍດັ່ງນີ້:

1. **ຊົນເຜົ່າ** ໝາຍເຖິງ ກຸ່ມຄົນທີ່ມີພາສາປາກເວົ້າຮ່ວມກັນ, ມີກົກເຄົ້າປະຫວັດສາດຄວາມເປັນມາຮ່ວມກັນ, ມີພື້ນຖານວັດທະນະທຳຮ່ວມກັນ ແລະ ເຊື່ອວ່າສືບເຊື້ອສາຍມາຈາກບັນພະບຸລຸດດຽວກັນ;

2. **ໂຮງຮຽນສາມັນກິນນອນຊົນເຜົ່າ** ໝາຍເຖິງ ໂຮງຮຽນທີ່ມີລະບົບກິນນອນ ໂດຍຮັບເອົານັກຮຽນທີ່ມາຈາກຄອບຄົວທີ່ທຸກຍາກ, ເປັນກຳພ້າ ຫຼື ກຳພອຍຂາດທີ່ຢູ່ອາໄສ, ພິການ (ສາມາດຮຽນຮ່ວມໄດ້) ແລະ ຢູ່ເຂດຫ່າງໄກສອກຫຼີກ ເຂົ້າຮຽນຊັ້ນມັດທະຍົມຕອນຕົ້ນ ແລະ ມັດທະຍົມຕອນປາຍ ຊຶ່ງໄດ້ຮັບເງິນເບ້ຍລ້ຽງ, ເງິນອຸດໜູນການຮຽນ ແລະ ເຄື່ອງຮັບໃຊ້ຊີວິດປະຈຳວັນຂັ້ນພື້ນຖານ ຈາກລັດຖະບານ ແລະ ຜູ້ໃຫ້ທຶນ. ນອກຈາກນັ້ນ, ໂຮງຮຽນຍັງສາມາດຮັບນັກຮຽນທີ່ຢູ່ເຂດໃກ້ຄຽງມາຮຽນຮ່ວມບໍ່ເກີນ 10%(ສິບສ່ວນຮ້ອຍ) ຂອງຈຳນວນນັກຮຽນຊົນເຜົ່າທັງໝົດໃນໂຮງຮຽນ ໂດຍບໍ່ໄດ້ຮັບເງິນເບ້ຍລ້ຽງ ແລະ ນະໂຍບາຍ;

3. **ຜູ້ທຸກຍາກ ແລະ ຄອບຄົວທຸກຍາກ** ໝາຍເຖິງ ບຸກຄົນ ຫຼື ຄອບຄົວ ທີ່ມີລາຍຮັບສະເລ່ຍຕ່ຳກວ່າ 180.000ກີບ/1ເດືອນ (ໜຶ່ງແສນແປດສິບພັນກີບຕໍ່ເດືອນ **ສຳລັບເຂດຊົນນະບົດ**) ຫຼື 240.000ກີບ/1ເດືອນ (ສອງແສນສີ່ສິບພັນກີບຕໍ່ເດືອນ **ສຳລັບເຂດຕົວເມືອງ**).

**ມາດຕາ 4 ຫຼັກການກ່ຽວກັບການຄຸ້ມຄອງໂຮງຮຽນສາມັນກິນນອນຊົນເຜົ່າ**

ການເຄື່ອນໄຫວວຽກງານຄຸ້ມຄອງໂຮງຮຽນສາມັນກິນນອນຊົນເຜົ່າ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບນະໂຍບາຍ, ກົດໝາຍ, ລະບຽບການ ແລະ ແຜນພັດທະນາການສຶກສາທິການ ແລະ ກິລາ ໃນແຕ່ລະໄລຍະ;

2. ຮັບປະກັນຫຼັກການລວມສູນປະຊາທິປະໄຕ, ບຸກຄົນຮັບຜິດຊອບ, ເປີດເຜີຍ, ໂປ່ງໃສ ແລະ ສາມາດກວດສອບໄດ້;

3. ຮັບປະກັນ ລະບົບການຮຽນ-ການສອນ ໃຫ້ຖືກຕ້ອງຕາມໂຄງການຫຼັກສູດ ແລະ ສອດຄ່ອງຕາມ ສາມ ລັກສະນະ ແລະ ຫ້າ ຫຼັກມູນຂອງການສຶກສາແຫ່ງຊາດ;

4. ຮັບປະກັນບໍ່ໃຫ້ມີການຈຳແນກ ຄວາມພິການ, ເພດ, ເຜົ່າ, ສາສະໜາ, ພື້ນຖານເສດຖະກິດ ແລະ ການໃຊ້ຄວາມຮຸນແຮງ.

**ມາດຕາ 5 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ພາຍໃນ ແລະ ຕ່າງປະເທດ ທັງພາກລັດ ແລະ ເອກະຊົນ ທີ່ເຄື່ອນໄຫວກ່ຽວກັບວຽກງານໂຮງຮຽນກິນນອນຊົນເຜົ່າ ໃນຂອບເຂດທົ່ວປະເທດ.

## ໝວດທີ 2
## ການສ້າງຕັ້ງໂຮງຮຽນສາມັນກິນນອນຊົນເຜົ່າ

**ມາດຕາ 6 ເງື່ອນໄຂການສ້າງຕັ້ງໂຮງຮຽນສາມັນກິນນອນຊົນເຜົ່າ**

ການສ້າງຕັ້ງໂຮງຮຽນສາມັນກິນນອນຊົນເຜົ່າ ມີເງື່ອນໄຂ ດັ່ງນີ້:

1. ສ້າງຕັ້ງຂຶ້ນບົນພື້ນຖານໃນເຂດທີ່ມີຄວາມຈຳເປັນ ແລະ ໄດ້ຮັບອະນຸມັດຈາກກະຊວງສຶກສາທິການ ແລະ ກິລາ ຫຼື ອຳນາດການປົກຄອງທ້ອງຖິ່ນ;
2. ສະຖານທີ່ກວ້າງຂວາງ, ມີສະພາບແວດລ້ອມທາງກາຍຍະພາບທີ່ເປັນມິດຕໍ່ນັກຮຽນ ແລະ ບໍ່ມີຄວາມສ່ຽງຕໍ່ໄພພິບັດທາງທຳມະຊາດ;
3. ມີໃບຕາດິນຖາວອນ ຫຼື ໃບອະນຸຍາດນຳໃຊ້ຢ່າງເປັນທາງການ;
4. ຄູສອນທີ່ມີວຸດທິການສຶກສາຈົບສະຖາບັນສ້າງຄູ ຫຼື ໄດ້ຮັບການຝຶກອົບຮົມວິຊາຄູ.

**ມາດຕາ 7 ມາດຕະຖານດ້ານອາຄານ, ສະຖານທີ່ ແລະ ຫ້ອງຮຽນ**

ມາດຕະຖານທາງດ້ານອາຄານ, ສະຖານທີ່ ແລະ ຫ້ອງຮຽນ ໃຫ້ປະຕິບັດຕາມລະບຽບການປຸກສ້າງຂອງກະຊວງສຶກສາທິການ ແລະ ກິລາ.

**ມາດຕາ 8 ຂະໜາດການບັນຈຸນັກຮຽນ**

ຂະໜາດການບັນຈຸຂອງນັກຮຽນໃນແຕ່ລະຫ້ອງຮຽນ ຫຼື ອັດຕາສ່ວນນັກຮຽນຕໍ່ຄູ ໃຫ້ປະຕິບັດຕາມຫຼັກການຄຸ້ມຄອງໂຮງຮຽນສາມັນສຶກສາ ແລະ ດຳລັດວ່າດ້ວຍລັດຖະກອນຄູ.

**ມາດຕາ 9 ປະຕິທິນການສຶກສາ**

ການກຳນົດວັນເປີດ ແລະ ປິດ ສົກຮຽນຂອງໂຮງຮຽນສາມັນກິນນອນຊົນເຜົ່າ ໃຫ້ປະຕິບັດຕາມປະຕິທິນການສຶກສາ ທີ່ໄດ້ກຳນົດໄວ້ໃນຫຼັກການຄຸ້ມຄອງຂອງໂຮງຮຽນສາມັນສຶກສາ ສຳລັບວັນພັກທາງລັດຖະການໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 3
## ເງື່ອນໄຂການຄັດເລືອກນັກຮຽນ

**ມາດຕາ 10 ເງື່ອນໄຂນັກຮຽນທີ່ຈະເຂົ້າຮຽນໃນໂຮງຮຽນສາມັນກິນນອນຊົນເຜົ່າ**

ນັກຮຽນທີ່ຈະເຂົ້າຮຽນໃນໂຮງຮຽນສາມັນກິນນອນຊົນເຜົ່າ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ຖືສັນຊາດລາວ;

2. ເປັນລູກຫຼານປະຊາຊົນລາວບັນດາເຜົ່າ ຈາກຄອບຄົວທີ່ທຸກຍາກ, ເປັນກຳພ້າ ຫຼື ກຳພອຍ, ຂາດທີ່ຢູ່ອາໄສ, ພິການ (ສາມາດເຂົ້າຮຽນຮ່ວມໄດ້) ແລະ ຢູ່ເຂດຫ່າງໄກສອກຫຼີກ, ມີ ສຸຂະພາບແຂງແຮງ, ຄຸນສົມບັດດີ, ຮັກໃນການຮຽນ, ສາມາດຮຽນຈົບຕາມຫຼັກສູດ ຊຶ່ງຮັບຈາກຄອບຄົວໜຶ່ງບໍ່ເກີນ 01 ຄົນ. ໃນກໍລະນີພິເສດ ແມ່ນໃຫ້ຄະນະກຳມະການຄັດເລືອກຄົ້ນຄວ້າພິຈາລະນາ;

3. ໄດ້ຮັບການຄັດເລືອກ, ນຳສົ່ງ ແລະ ຢັ້ງຢືນຈາກຄະນະກຳມະການຄັດເລືອກແຕ່ລະຂັ້ນ;

4. ນັກຮຽນທີ່ຈະເຂົ້າຮຽນຊັ້ນມັດທະຍົມຕອນຕົ້ນ (ມ1) ມີປະຫວັດຈະແຈ້ງ, ມີໃບຢັ້ງຢືນການສຶກສາ, ຜົນການຮຽນທຸກວິຊາໄດ້ຄະແນນ 5 ຂຶ້ນໄປ ແລະ ໄດ້ຮັບການອະນຸມັດຈາກຜູ້ປົກຄອງ.

**ມາດຕາ 11 ເງື່ອນໄຂຂອງນັກຮຽນທີ່ໄດ້ຮັບທຶນການສຶກສາຈາກລັດຖະບານ**

ນັກຮຽນຊົນເຜົ່າທີ່ໄດ້ຮັບທຶນການສຶກສາ ນອກຈາກເງື່ອນໄຂທີ່ໄດ້ກຳນົດໄວ້ໃນມາດຕາ 10 ແລ້ວ ຕ້ອງມີເງື່ອນໄຂເພີ່ມເຕີມ ດັ່ງນີ້:

1. ໄດ້ຮັບການຄັດເລືອກຈາກຄະນະກຳມະການຂັ້ນຕ່າງໆ ຕາມມາດຖານການຄັດເລືອກນັກຮຽນຊົນເຜົ່າຂອງກະຊວງສຶກສາທິການ ແລະ ກິລາວາງອອກ;

2. ມີໜັງສືຢັ້ງຢືນຈາກພາກສ່ວນທີ່ກ່ຽວຂ້ອງ ກ່ອນການຮັບທຶນການສຶກສາ ແລະ ມີເລກລະຫັດປະຈຳຕົວເປັນຂອງຕົນເອງ;

3. ມີສຸຂະພາບແຂງແຮງ ແລະ ບໍ່ເປັນພະຍາດຊ້ຳເຮື້ອ ຫຼື ພະຍາດຕິດແປດ;

4. ບໍ່ ພົວພັນ ແລະ ເສບສິ່ງເສບຕິດທີ່ຕ້ອງຫ້າມ.

**ມາດຕາ 12 ໜ້າທີ່ ແລະ ຂອບເຂດສິດຂອງນັກຮຽນທີ່ໄດ້ຮັບທຶນການສຶກສາຈາກລັດຖະບານ**

**1. ໜ້າທີ່**

ນັກຮຽນສາມັນກິນນອນຊົນເຜົ່າ ມີໜ້າທີ່ ດັ່ງນີ້:

1.1. ປະຕິບັດຕາມແນວທາງນະໂຍບາຍ, ກົດໝາຍ ແລະ ກົດລະບຽບຂອງໂຮງຮຽນວາງອອກຢ່າງເຂັ້ມງວດ;

1.2. ເອົາໃຈໃສ່ສຶກສາຮໍ່າຮຽນໃຫ້ຄົບຕາມຫຼັກສູດການສຶກສາສຳລັບນັກຮຽນຊົນເຜົ່າ ທີ່ກະຊວງສຶກສາທິການ ແລະ ກິລາ ວາງອອກ;

1.3. ຕັ້ງໜ້າເຝິກຝົນຫຼໍ່ຫຼອມຕົນເອງ ໃຫ້ເປັນຜູ້ທີ່ມີຄຸນສົມບັດສິນທຳປະຕິວັດ, ມີຄວາມຮູ້, ຄວາມສາມາດ ແລະ ສາມາດສະໝັກເຂົ້າເປັນສະມາຊິກຂອງອົງການຈັດຕັ້ງມະຫາຊົນ ຕາມເງື່ອນໄຂ;

1.4. ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**2. ຂອບເຂດສິດ**

ນັກຮຽນສາມັນກິນນອນຊົນເຜົ່າ ມີສິດ ດັ່ງນີ້:

2.1. ຮັບອັດຕາເບັ້ຍລ້ຽງ (12 ເດືອນ) ຕາມນະໂຍບາຍຂອງລັດຖະບານວາງອອກໃນແຕ່ລະໄລຍະ;

2.2. ຮັບການຍົກເວັ້ນຄ່າຮຽນ, ຄ່າຫໍພັກ ແລະ ຄ່າລົງທະບຽນກິດຈະກຳການເຄື່ອນໄຫວນອກຫຼັກສູດຕ່າງໆ ທີ່ໂຮງຮຽນຈັດຂຶ້ນ;

2.3. ໄດ້ຮັບບຸລິມະສິດເຂົ້າຮຽນຕໍ່ສາຍອາຊີວະສຶກສາ ແລະ ການສຶກສາຊັ້ນສູງ ຕາມເງື່ອນໄຂ ແລະ ຄວາມສາມາດຂອງຕົນເອງ;

2.4. ຮັບການບຳລຸງພາສາລາວ ແລະ ວິຊາທີ່ຕົນເອງຮຽນອ່ອນໃນຕອນບ່າຍ, ກາງຄືນ, ວັນເສົາ ຫຼື ຍາມພັກຮຽນເພື່ອໃຫ້ຮຽນທັນໝູ່ເພື່ອນ;

2.5. ໄດ້ຮັບສິດອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 13 ການປະກອບເອກະສານ**

ນັກຮຽນທີ່ໄດ້ຮັບການຄັດເລືອກເຂົ້າຮຽນ ໃນໂຮງຮຽນສາມັນກິນນອນຊົນເຜົ່າ ຕ້ອງປະກອບ ເອກະສານ ດັ່ງນີ້:

1. ຊີວະປະຫວັດ (ຕິດຮູບຂະໜາດ 3x4);
2. ໃບຄຳຮ້ອງຂອງຜູ້ປົກຄອງ;
3. ໃບຢັ້ງຢືນຖານະຄອບຄົວ ຈາກອົງການປົກຄອງຂັ້ນບ້ານ;
4. ໜັງສືສັນຍາ;
5. ໃບຢັ້ງຢືນທີ່ຢູ່ ແລະ ສຳເນົາປຶ້ມສຳມະໂນຄົວ;
6. ປຶ້ມຕິດຕາມການຮຽນ ແລະ ໃບປະກາດຈົບຊັ້ນ ຫຼື ທຽບເທົ່າ;
7. ໃບຢັ້ງຢືນສຸຂະພາບ ຈາກໂຮງໝໍ ຫຼື ໂຮງໝໍນ້ອຍ ແລະ ໃບຢັ້ງຢືນກວດສານເສບຕິດ;
8. ບົດບັນທຶກການຄັດເລືອກ ແລະ ຂໍ້ຕົກລົງຂັ້ນເມືອງ;
9. ໃບນຳສົ່ງ ຈາກເມືອງ ຫາ ແຂວງ.

**ມາດຕາ 14 ຄະນະກຳມະການຄັດເລືອກ**

ຄະນະກຳມະການຄັດເລືອກນັກຮຽນທີ່ເຂົ້າຮຽນ ໃນໂຮງຮຽນສາມັນກິນນອນຊົນເຜົ່າ ປະກອບມີ ດັ່ງນີ້:

**1. ຄະນະກຳມະການຄັດເລືອກ ຂັ້ນເມືອງ:**

1.1. ຄະນະປະຈຳພັກເມືອງ ຜູ້ຊີ້ນຳວຽກງານວັດທະນະທຳ-ສັງຄົມ ເປັນປະທານ;

1.2. ຫົວໜ້າຫ້ອງການສຶກສາທິການ ແລະ ກິລາເມືອງ, ເທດສະບານ, ນະຄອນ ເປັນຮອງປະທານ;

1.3. ຫົວໜ້າຫ້ອງການສາທາລະນະສຸກເມືອງ, ເທດສະບານ, ນະຄອນ ເປັນຄະນະ;

1.4. ຫົວໜ້າຫ້ອງການພາຍໃນເມືອງ, ເທດສະບານ, ນະຄອນ ເປັນຄະນະ;

1.5. ແນວລາວສ້າງຊາດເມືອງ, ເທດສະບານ, ນະຄອນ ເປັນຄະນະ;

1.6. ຄະນະພັດທະນາການສຶກສາຂັ້ນບ້ານ ເປັນຄະນະ;

1.7. ຫົວໜ້າໜ່ວຍງານການສຶກສາພາກບັງຄັບ, ຫ້ອງການສຶກສາທິການ ແລະ ກິລາເມືອງ, ເທດສະບານ, ນະຄອນ ເປັນເລຂານຸການ.

2. **ຄະນະກຳມະການຄັດເລືອກ ຂັ້ນແຂວງ:**

2.1. ຫົວໜ້າພະແນກສຶກສາທິການ ແລະ ກິລາແຂວງ ເປັນປະທານ;

2.2. ຜູ້ອຳນວຍການໂຮງຮຽນສາມັນກິນນອນຊົນເຜົ່າ ເປັນຮອງປະທານ;

2.3. ຫົວໜ້າຂະແໜງສາມັນສຶກສາ, ພະແນກສຶກສາທິການ ແລະ ກິລາແຂວງ ເປັນຄະນະ;

2.4. ຫົວໜ້າຂະແໜງກວດກາ-ປະເມີນຜົນ, ພະແນກສຶກສາທິການ ແລະ ກິລາແຂວງ ເປັນຄະນະ;

2.5. ແນວລາວສ້າງຊາດແຂວງ ເປັນຄະນະ.

## ໝວດທີ 4

## ໜ້າທີ່ ແລະ ຂອບເຂດສິດຂອງ ຄະນະອຳນວຍການ, ຄູ ແລະ ນັກຮຽນ

### ມາດຕາ 15 ໜ້າທີ່ ແລະ ຂອບເຂດສິດຂອງຄະນະອຳນວຍການ

ຄະນະອຳນວຍການໂຮງຮຽນ ມີໜ້າທີ່ ແລະ ຂອບເຂດສິດ ດັ່ງນີ້:

1. ຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກ-ລັດຖະບານ, ລັດຖະທຳມະນູນ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນພັດທະນາການສຶກສາ ແລະ ກິລາ ໃນແຕ່ລະໄລຍະ;

2. ເຂົ້າຮ່ວມຂະບວນການຄັດເລືອກນັກຮຽນຊົນເຜົ່າຜູ້ດ້ອຍໂອກາດ ທີ່ຈະມາເຂົ້າຮຽນໃນໂຮງຮຽນຂອງຕົນເອງ;

3. ສະເໜີ ການສັບຊ້ອນນັກຮຽນຊົນເຜົ່າ ມ4 ແລະ ມ7 ເຂົ້າຮຽນຕໍ່ວິຊາຊີບ ແລະ ການສຶກສາຊັ້ນສູງຕໍ່ຂັ້ນເທິງຖັດຕົນ;

4. ສຶກສາອົບຮົມແນວຄິດການເມືອງຂອງພະນັກງານ-ລັດຖະກອນ, ຄູ ແລະ ນັກຮຽນໃຫ້ມີຄຸນສົມບັດສົມທຳປະຕິບັດ, ມີນ້ຳໃຈຮັກຊາດ, ຮັກລະບອບປະຊາທິປະໄຕປະຊາຊົນ;

5. ສ້າງລະບຽບຄຸ້ມຄອງໂຮງຮຽນ ແລະ ວາງແຜນພັດທະນາໂຮງຮຽນ ໃນແຕ່ລະໄລຍະ;

6. ວາງແຜນ ແລະ ຈັດຕັ້ງການຮຽນ-ການສອນ ຕາມຫຼັກສູດການສຶກສາສາຍສາມັນ, ຫຼັກສູດສາມັນວິຊາຊີບ ແລະ ຫຼັກສູດທ້ອງຖິ່ນທີ່ເໝາະສົມ;

7. ອະນຸມັດແຜນການ ຈັດຊື້ຢາ, ອຸປະກອນການແພດ, ຈັດຊື້ອາຫານສົດ, ແຕ່ງກິນ ແລະ ການນຳໃຊ້ລົດ;

8. ຊີ້ນຳ ແລະ ນຳພາໃນການພັດທະນາສື່ ແລະ ນຳໃຊ້ສື່ການຮຽນ-ການສອນທີ່ຫຼາກຫຼາຍ;

9. ຊີ້ນຳ ແລະ ນຳພາການຜະລິດກະສິກຳຂອງໂຮງຮຽນ;

10. ຊຸກຍູ້, ສົ່ງເສີມ ແລະ ພັດທະນາບຸກຄະລະກອນ ໃຫ້ມີຄວາມຮູ້, ຄວາມສາມາດ ແລະ ມີທັກສະໃນການສອນນັກຮຽນ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ;

11. ປົກປັກຮັກສາສະພາບແວດລ້ອມ ແລະ ຊັບສົມບັດຂອງໂຮງຮຽນໃຫ້ມີຄວາມຍືນຍົງ;

12. ປະສານສົມທົບກັບອຳນາດການປົກຄອງທ້ອງຖິ່ນ, ຄະນະພັດທະນາການສຶກສາຂັ້ນບ້ານ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການພັດທະນາໂຮງຮຽນ;

13. ຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດການຮຽນ-ການສອນ ພ້ອມທັງສະຫຼຸບລາຍງານວຽກງານພາຍໃນໂຮງຮຽນ ໃຫ້ຂັ້ນເທິງຮັບຊາບ ຢ່າງເປັນປົກກະຕິ;

14. ປະຕິບັດໜ້າທີ່ ແລະ ນຳໃຊ້ສິດອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 16 ໜ້າທີ່ ແລະ ຂອບເຂດສິດຂອງຄູ**

ຄູໃນໂຮງຮຽນສາມັນກິນນອນຊົນເຜົ່າ ມີໜ້າທີ່ ແລະ ຂອບເຂດສິດ ດັ່ງນີ້:

1. ແຕ່ງ, ປັບປຸງ, ຮຽບຮຽງບົດສອນ ແລະ ປຶ້ມຕຳລາ, ກຽມອຸປະກອນ ແລະ ສື່ການຮຽນ-ການສອນ, ຄົ້ນຄວ້າວິໄຈ ແລະ ບໍລິການທາງດ້ານວິຊາການແກ່ສັງຄົມຕາມລະບຽບການ;

2. ສອນຕາມຫຼັກສູດ, ຕາມວິຊາສະເພາະ ແລະ ຕາມຄວາມຊຳນານ;

3. ຕິດຕາມ, ກວດກາ, ວັດຜົນ ແລະ ປະເມີນຜົນຜູ້ຮຽນຢ່າງຕໍ່ເນື່ອງ ແລະ ເປັນທຳ;

4. ນຳເອົາຄຳສະເໜີຂອງຄູປະຈຳວິຊາ ເພື່ອສ່ອງແສງຕໍ່ນັກຮຽນໃນຫ້ອງທີ່ຕົນຮັບຜິດຊອບ;

5. ຮັບເອົາຄຳຕຳນິຕິຊົມຂອງນັກຮຽນ ຕໍ່ຄູປະຈຳວິຊາ ເພື່ອສະເໜີຕໍ່ໜ່ວຍງານວິຊາການ ແລະ ຄະນະອຳນວຍການໂຮງຮຽນ;

6. ສຳຫຼວດຫ້ອງຮຽນ ເພື່ອຕິດຕາມພຶດຕິກຳຂອງນັກຮຽນ ຢ່າງເປັນປົກກະຕິ;

7. ໄດ້ຮັບການບຳລຸງ, ຍົກລະດັບຄວາມຮູ້ທາງດ້ານວິຊາສະເພາະທີ່ຕົນສອນ ແລະ ສິ່ງທີ່ກ່ຽວຂ້ອງກັບການສອນໃຫ້ສູງຂຶ້ນ;

8. ສະເໜີຄຳຄິດຄຳເຫັນ ແລະ ລາຍງານຜົນການເຄື່ອນໄຫວຂອງຕົນ ໃຫ້ຜູ້ບໍລິຫານທີ່ຕົນຂຶ້ນກັບ;

9. ໄດ້ຮັບການປົກປ້ອງສິດ, ຜົນປະໂຫຍດ ແລະ ກຽດສັກສີຂອງຕົນ;

10. ປະຕິບັດໜ້າທີ່ ແລະ ນຳໃຊ້ສິດອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 17 ໜ້າທີ່ ແລະ ຄວາມຮັບຜິດຊອບຂອງນັກຮຽນ**

ນັກຮຽນໃນໂຮງຮຽນສາມັນກິນນອນຊົນເຜົ່າ ມີໜ້າທີ່ ແລະ ຄວາມຮັບຜິດຊອບ ດັ່ງນີ້:

1. ການເຄື່ອນໄຫວຂອງນັກຮຽນ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການສຶກສາ, ລະບຽບການຄຸ້ມຄອງຄູ ແລະ ນັກຮຽນ ໂຮງຮຽນສາມັນສຶກສາ;

2. ເຄື່ອງແບບນັກຮຽນ ແລະ ການນຸ່ງຖືຂອງນັກຮຽນ ໃຫ້ປະຕິບັດຕາມລະບຽບການນຸ່ງຖືຂອງນັກຮຽນໂຮງຮຽນມັດທະຍົມສຶກສາ;

3. ການຂາດຮຽນຂອງນັກຮຽນ ໃນໂຮງຮຽນຊົນເຜົ່າແມ່ນບໍ່ໃຫ້ເກີນ 30 (ສາມສິບ) ວັນ ໂດຍບໍ່ມີເຫດຜົນ. ກໍລະນີຂາດມີເຫດຜົນແມ່ນບໍ່ໃຫ້ເກີນ 35 (ສາມສິບຫ້າ) ວັນ;

4. ນັກຮຽນມີຈຸດປະສົງອອກນອກບໍລິເວນໂຮງຮຽນ ຕ້ອງໄດ້ຮັບອະນຸຍາດຈາກຄະນະຮັບຜິດຊອບຫໍພັກປະຈຳໂຮງຮຽນ, ນັກຮຽນມີວຽກຈຳເປັນ ຕ້ອງຂຽນໃບຄຳຮ້ອງຂໍພັກຮຽນ ແລະ ໄດ້ຮັບອະນຸຍາດຈາກຄະນະອຳນວຍການໂຮງຮຽນ ຈຶ່ງສາມາດພັກໄດ້ ແລະ ຕ້ອງກັບມາໂຮງຮຽນຕາມກຳນົດເວລາ;

5. ຄົ້ນຄວ້າບົດຮຽນ ແລະ ແກ້ບົດຝຶກຫັດໃນພາກຄ່ຳ, ຮຽນເພີ່ມວິຊາທີ່ຕົນເອງຮຽນອ່ອນ ຕາມຊົ່ວໂມງທີ່ໂຮງຮຽນຈັດໃຫ້ ແລະ ຄົ້ນຄວ້າຮ່ວມກັບໝູ່ເພື່ອນທີ່ຮຽນໄດ້ດີກວ່າ;

6. ນັກຮຽນເກັ່ງໃຫ້ສືບຕໍ່ຄົ້ນຄວ້າ ຫຼື ເຂົ້າຮຽນເພີ່ມໃນວິຊາທີ່ຕົນເອງມີພອນສະຫວັນ ແລະ ວິຊາພາສາຕ່າງປະເທດ ເພື່ອກຽມຄວາມພ້ອມເຂົ້າສອບເສັງນັກຮຽນເກັ່ງໃນລະດັບຕ່າງໆ ຫຼື ສອບເສັງເອົາທຶນການສຶກສາ ທັງພາຍໃນ ແລະ ຕ່າງປະເທດ;

7. ຈັດຕັ້ງເຮັດອະນາໄມຫ້ອງນອນ, ຫ້ອງນ້ຳ, ອ່າງອາບນ້ຳ ແລະ ສະຖານທີ່ອ້ອມຫໍພັກຂອງໃຜລາວເປັນປະຈຳ;

8. ນັກຮຽນທີ່ມີຈຸດປະສົງຢາກອອກຈາກຫໍພັກໃນຕອນແລງວັນສຸກ ຫຼື ຕອນເຊົ້າວັນເສົາ, ຕ້ອງມີຜູ້ມາຮັບປະກັນເອົາ ພ້ອມທັງເຊັນຢັ້ງຢືນ (ແຈ້ງບ່ອນທີ່ຈະໄປພັກເຊົາ ແລະ ເບີໂທລະສັບຕິດຕໍ່) ແລະ ຕອນແລງຂອງວັນອາທິດຕ້ອງກັບມາມີໜ້າໃນໂຮງຮຽນ;

9. ນັບຖືກົດລະບຽບຂອງຫໍພັກ ແລະ ຮັກສາຄວາມສະຫງົບ;

10. ປະຕິບັດໜ້າທີ່ ແລະ ຄວາມຮັບຜິດຊອບອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 18 ໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງແພດ, ເອື້ອຍລ້ຽງ ແລະ ພະນັກງານຂັບລົດ**

**1. ໜ້າທີ່ ແລະ ຄວາຮັບຜິດຊອບຂອງແພດ**

ແພດ ມີໜ້າທີ່ ແລະ ຄວາມຮັບຜິດຊອບ ດັ່ງນີ້:

1.1. ສ້າງແຜນການຈັດຊື້ຢາ ແລະ ອຸປະກອນການແພດທີ່ຈຳເປັນຂັ້ນພື້ນຖານ ຮ່ວມກັບຄະນະອຳນວຍການ ແລະ ຄູສອນ ປະຈຳໄຕມາດ;

1.2. ຈົດບັນທຶກການເບີກຈ່າຍຢາ ໃຫ້ກັບພະນັກງານ-ລັດຖະກອນ, ຄູ ແລະ ນັກຮຽນ ທີ່ໄດ້ຮັບຢາ ແລະ ສະຫຼຸບປະຈຳອາທິດໃສ່ປຶ້ມບັນທຶກ;

13. ຮັບປະກັນການເກັບມ້ຽນຢາໄວ້ບ່ອນທີ່ປອດໄພ ແລະ ຖືກຕ້ອງຕາມຫຼັກການ ທີ່ ກະຊວງສາທາລະນະສຸກວາງອອກ;

1.4. ອະນາໄມຫ້ອງພະຍາບານ, ປັດກວາດ, ເຊັດ, ຖູພື້ນຫ້ອງ ແລະ ອຸປະກອນການແພດຂັ້ນພື້ນຖານ ເຊັ່ນ: ຊາເຕ້, ບາຫຼອດ, ຊາມ ແລະ ອື່ນໆ, ໃຫ້ສະອາດ ແລະ ເປັນລະບຽບສະເໝີ;

1.5. ຫຼີກເວັ້ນການໃຫ້ຢາ ທີ່ບໍ່ໄດ້ຮັບການກວດສຸຂະພາບຂັ້ນພື້ນຖານ ຫຼື ເອົາຢາອອກໄປ ໂດຍບໍ່ໄດ້ລາຍງານໃຫ້ຄະນະອຳນວຍການຮັບຊາບ;

1.6. ຕິດຕາມ, ກວດກາສຸຂະພາບໃຫ້ນັກຮຽນ ເປັນປົກກະຕິ, ໃນກໍລະນີທີ່ມີພະນັກງານ-ລັດຖະກອນ, ຄູ ແລະ ນັກຮຽນເຈັບເປັນຕ້ອງກວດສຸຂະພາບຂັ້ນພື້ນຖານ ແລະ ນຳສົ່ງໄປຍັງ ໂຮງໝໍນ້ອຍ, ໂຮງໝໍຊຸມຊົນ ແລະ ໂຮງໝໍແຂວງ-ທີ່ໃກ້ຄຽງ ພ້ອມທັງລາຍງານໃຫ້ຄະນະອຳນວຍການຮັບຊາບ;

1.7. ຈັດຝຶກອົບຮົມ ຫຼື ໃຫ້ຄຳປຶກສາ ກ່ຽວກັບຄວາມເປັນພິການ ໃຫ້ຄະນະອຳນວຍການ, ຄູ, ພໍ່/ແມ່, ຜູ້ປົກຄອງນັກຮຽນ, ຄະນະພັດທະນາການສຶກສາຂັ້ນບ້ານ (ບ້ານທີ່ມີໂຮງຮຽນສ້າງຕັ້ງຂຶ້ນ) ແລະ ພາກສ່ວນທີ່ກ່ຽວຂ້ອງ;

1.8. ສະຫຼຸບ ລາຍງານທຸກບັນຫາທີ່ເກີດຂຶ້ນ ໃຫ້ຄະນະອຳນວຍການໂຮງຮຽນຊາບທັນເວລາ;

1.9. ປະຕິບັດໜ້າທີ່ ແລະ ຄວາມຮັບຜິດຊອບອື່ນ ຕາມການມອບໝາຍຂອງຄະນະອຳນວຍການ.

**2. ໜ້າທີ່ ແລະ ຄວາມຮັບຜິດຊອບຂອງເອື້ອຍລ້ຽງ (ແມ່ຄົວ/ພໍ່ຄົວ)**

ເອື້ອຍລ້ຽງ ຫຼື ແມ່ຄົວ/ພໍ່ຄົວ ມີໜ້າທີ່ ແລະ ຄວາມຮັບຜິດຊອບ ດັ່ງນີ້:

2.1. ສ້າງແຜນ ຈັດຊື້ອາຫານສົດ ຈາກພໍ່ແມ່, ຊຸມຊົນ ຫຼື ຕະຫຼາດ ແລະ ການແຕ່ງກິນຮ່ວມກັບຄູສອນໃນແຕ່ລະວັນ ຢ່າງໜ້ອຍ 2 ເບື້ອງຂຶ້ນໄປ ພ້ອມດ້ວຍໝາກໄມ້ຕາມລະດູການ ;

2.2. ຈົດບັນທຶກການໃຊ້ຈ່າຍ ໃນການຊື້ອາຫານສົດປະຈຳວັນ ແລະ ສະຫຼຸບປະຈຳອາທິດໃສ່ປຶ້ມບັນທຶກ;

2.3. ຮັບປະກັນອາຫານ ມີຄວາມປອດໄພ, ຖືກສຸຂະອະນາໄມ, ຖືກຕາມຫຼັກໂພຊະນາການຂັ້ນພື້ນຖານ ແລະ ຫຼີກເວັ້ນການນຳໃຊ້ ຖົງຢາງ ຫຼື ກ່ອງໂຟມໃສ່ອາຫານໃຫ້ນັກຮຽນ;

2.4. ອະນາໄມເຮືອນຄົວ, ລ້າງ ແລະ ມ້ຽນມັດອຸປະກອນການແຕ່ງກິນ (ຖ້ວຍ, ບ່ວງ, ຊາມ ແລະ ອື່ນໆ) ໃຫ້ສະອາດ ແລະ ເປັນລະບຽບ;

2.5. ຮັບປະກັນຄວາມປອດໄພຂອງນັກຮຽນ ໃນກໍລະນີທີ່ມີນັກຮຽນ ມາຝຶກແຕ່ງກິນກັບເອື້ອຍລ້ຽງ ຫຼື ແມ່ຄົວ/ພໍ່ຄົວ;

2.6. ສະຫຼຸບ ລາຍງານທຸກບັນຫາທີ່ເກີດຂຶ້ນ ໃຫ້ຄະນະອຳນວຍການໂຮງຮຽນຊາບທັນເວລາ;

2.7. ປະຕິບັດໜ້າທີ່ ແລະ ຄວາມຮັບຜິດຊອບອື່ນ ຕາມການມອບໝາຍຂອງຄະນະອຳນວຍການ.

**3. ໜ້າທີ່ ແລະ ຄວາມຮັບຜິດຊອບຂອງພະນັກງານຂັບລົດ**

ພະນັກງານຂັບລົດ ມີໜ້າທີ່ ແລະ ຄວາມຮັບຜິດຊອບ ດັ່ງນີ້:

3.1. ນຳໃຊ້ລົດໃນການໄປຊື້ອາຫານສົດຈາກພໍ່/ແມ່, ຊຸມຊົນ ແລະ ຕະຫຼາດ;

3.2. ຈົດບັນທຶກການໃຊ້ລົດທຸກຄັ້ງ ໃນການໄປຊື້ອາຫານສົດປະຈຳວັນ ພ້ອມທັງສະຫຼຸບປະຈຳອາທິດໃສ່ປຶ້ມບັນທຶກ;

3.3. ຮັບປະກັນຄວາມປອດໄພ, ຖືກຕ້ອງຕາມລະບຽບການນຳໃຊ້ລົດໃນຂັ້ນໂຮງຮຽນ, ກວດກາສະພາບເຕັກນິກລົດ ກ່ອນການນຳໃຊ້ທຸກຄັ້ງເປັນປະຈຳ ແລະ ຫຼີກເວັ້ນການນຳໃຊ້ລົດ ໂດຍບໍ່ໄດ້ຮັບການອະນຸຍາດ ຫຼື ຈາກການເຫັນດີຂອງຄະນະອຳນວຍການ;

3.4. ອະນາໄມລົດ, ລ້າງ ໃຫ້ສະອາດ ແລະ ເປັນລະບຽບສະເໝີ ແລະ ມ້ຽນລົດໄວ້ໃນໂຮງລົດພາຍຫລັງນຳໃຊ້ແລ້ວໃນແຕ່ລະວັນ;

3.5. ຮັບ-ສົ່ງ ແມ່ຄົວໄປຊື້ວັດຖຸດິບເຂົ້າໃນການແຕ່ງກິນ ພ້ອມທັງຮັບປະກັນຄວາມປອດໄພ;

3.6. ຮັບ-ສົ່ງພະນັກງານ-ລັດຖະກອນ, ຄູ ແລະ ນັກຮຽນເຈັບເປັນຕ້ອງກວດສຸຂະພາບຂັ້ນພື້ນຖານ ແລະ ນຳສົ່ງໄປຍັງ ໂຮງໝໍນ້ອຍ, ໂຮງໝໍຊຸມຊົນ ແລະ ໂຮງໝໍແຂວງ ທີ່ໃກ້ຄຽງ ພ້ອມທັງຮັບປະກັນຄວາມປອດໄພ;

3.7. ສະຫຼຸບ, ລາຍງານທຸກບັນຫາທີ່ເກີດຂຶ້ນ ໃຫ້ຄະນະອຳນວຍການໂຮງຮຽນຊາບທັນເວລາ;

3.8. ປະຕິບັດໜ້າທີ່ ແລະ ຄວາມຮັບຜິດຊອບອື່ນ ຕາມການມອບໝາຍຂອງຄະນະອຳນວຍການ.

## ໝວດທີ 5
## ຂໍ້ຫ້າມ

**ມາດຕາ 19 ຂໍ້ຫ້າມທົ່ວໄປ**

ນອກຈາກຂໍ້ຫ້າມທີ່ໄດ້ລະບຸໄວ້ໃນກົດໝາຍ ກົດໝາຍວ່າດ້ວຍ ການສຶກສາ ຍັງມີຂໍ້ຫ້າມຕື່ມ ສໍາລັບ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ມີ ພຶດຕິກໍາ ດັ່ງນີ້:

1. ຂັດຂວາງການເຄື່ອນໄຫວວຽກງານ, ກິດຈະກໍາກ່ຽວກັບການສຶກສາ;
2. ເຄື່ອນໄຫວທີ່ເປັນການແຕະຕ້ອງເຖິງກຽດສັກສີ ຫຼື ບົດບາດຂອງຄູ, ບຸກຄະລາກອນ ການສຶກສາ ແລະ ສະຖານການສຶກສາ;
3. ໂຄສະນາຊວນເຊື່ອ ກ່ຽວກັບວຽກງານການສຶກສາ ເກີນຄວາມເປັນຈິງ;
4. ບໍລິການສິ່ງມຶນເມົາ, ສິ່ງເສບຕິດ, ຫຼິ້ນການພະນັນທີ່ຕ້ອງຫ້າມ, ບັນເທີງ ແລະ ສິ່ງສຽງດັງຢູ່ໃນ ບໍລິເວນ ແລະ ບ່ອນໄກ້ຄຽງ ແລະ ສະຖາບັນການສຶກສາ;
5. ນໍາໃຊ້ກາໝາຍ, ເຄື່ອງໝາຍ ແລະ ຕາປະທັບ ຂອງອົງການຄຸ້ມຄອງວຽກງານການສຶກສາ ໂດຍ ບໍ່ໄດ້ຮັບອະນຸມັດ;
6. ປະພຶດໃນສິ່ງທີ່ບໍ່ຖືກຕ້ອງຕາມຮີດຄອງປະເພນີ ອັນດີງາມຂອງຊາດ;
7. ເຜີຍແຜ່ ສິ່ງລາມົກອະນາຈານ ທີ່ຂັດກັບຮີດຄອງປະເພນີ ອັນດີງາມຂອງຊາດ ພາຍໃນສະຖານການສຶກສາ;
8. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 20 ຂໍ້ຫ້າມຂອງພະນັກງານ-ລັດຖະກອນ ແລະ ຄູ**

ຂໍ້ຫ້າມຂອງພະນັກງານ-ລັດຖະກອນ ແລະ ຄູ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການສຶກສາ, ກົດໝາຍ ວ່າດ້ວຍພະນັກງານ-ລັດຖະກອນ, ດໍາລັດ ລັດຖະກອນຄູ, ລະບຽບການຄຸ້ມຄອງຄູ ແລະ ນັກຮຽນໂຮງຮຽນ ມັດທະຍົມສຶກສາ ແລະ ລະບຽບການອື່ນໆ ທີ່ກ່ຽວຂ້ອງ.

**ມາດຕາ 21 ຂໍ້ຫ້າມຂອງນັກຮຽນ**

ຫ້າມນັກຮຽນ ມີ ພຶດຕິກໍາ ດັ່ງນີ້:

1. ສ້າງຄວາມເປິເປື້ອນໃນບໍລິເວນຫໍພັກ, ຫ້ອງອາຫານ, ຫ້ອງຮຽນ, ຫ້ອງປະຊຸມ ແລະ ສະຖານທີ່ ທີ່ຕ້ອງຫ້າມອື່ນໆ;
2. ຊັກຊວນເອົາຄົນພາຍນອກ ຫຼື ພີ່ນ້ອງຂອງຕົນເອງ ເຂົ້າມານອນໃນຫໍພັກ ໂດຍບໍ່ໄດ້ຮັບອະນຸຍາດ ຈາກຄະນະຮັບຜິດຊອບຫໍພັກ;
3. ໃຊ້ເຕົາໄຟຟ້າໃນຫໍພັກ, ຕັດຕໍ່ ຫຼື ຕິດຕັ້ງໄຟຟ້າ-ນໍ້າປະປາ ໂດຍບໍ່ໄດ້ຮັບອະນຸຍາດຈາກໂຮງຮຽນ ຢ່າງເດັດຂາດ;
4. ຜູ້ທີ່ບໍ່ມີສ່ວນກ່ຽວຂ້ອງ ເຂົ້າໄປເຮືອນຄົວໃນເວລາແຕ່ງກິນ, ເຄື່ອນຍ້າຍ ຫຼື ທໍາລາຍເຄື່ອງຂອງ ຕ່າງໆ ແລະ ສ້າງສິ່ງເປິເປື້ອນພາຍໃນເຮືອນຄົວ ແລະ ຫ້ອງອາຫານ;

5. ແຕ່ງກິນເພີ່ມ ຈະເປັນກໍລະນີໃດກໍຕາມ;

6. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 6

## ການຄຸ້ມຄອງ ແລະ ກວດກາວຽກງານຄຸ້ມຄອງໂຮງຮຽນສາມັນກິນນອນຊົນເຜົ່າ

**ມາດຕາ 22 ອົງການຄຸ້ມຄອງ ແລະ ກວດກາ**

ອົງການຄຸ້ມຄອງ ແລະ ກວດກາວຽກງານຄຸ້ມຄອງໂຮງຮຽນສາມັນກິນນອນຊົນເຜົ່າ ປະກອບ ດ້ວຍ:

1. ກະຊວງສຶກສາທິການ ແລະ ກິລາ;
2. ພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ;
3. ຫ້ອງການສຶກສາທິການ ແລະ ກິລາເມືອງ, ເທດສະບານ, ນະຄອນ;
4. ໂຮງຮຽນສາມັນກິນນອນຊົນເຜົ່າ.

**ມາດຕາ 23 ໜ້າທີ່ ແລະ ຂອບເຂດສິດຂອງກະຊວງສຶກສາທິການ ແລະ ກິລາ**

ນອກຈາກໜ້າທີ່ແລະ ຂອບເຂດ ສິດທີ່ໄດ້ກໍານົດໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງແລ້ວ ຍັງມີໜ້າທີ່ເພີ່ມເຕີມ ດັ່ງນີ້:

1. ສ້າງ, ປັບປຸງ ແລະ ເຜີຍແຜ່ບັນດານິຕິກໍາທີ່ກ່ຽວຂ້ອງກັບໂຮງຮຽນສາມັນກິນນອນຊົນເຜົ່າ;

2. ຊີ້ນໍາ ແລະ ໃຫ້ຄໍາປຶກສາໃນການຄຸ້ມຄອງ-ບໍລິຫານໂຮງຮຽນສາມັນກິນນອນຊົນເຜົ່າ ໃຫ້ໄປຕາມແນວທາງນະໂຍບາຍຂອງພັກ ແລະ ລັດ;

3. ຕິດຕາມ ແລະ ກວດກາ ການນໍາໃຊ້ເງິນເບັຍລ້ຽງ ແລະ ເງິນນະໂຍບາຍນັກຮຽນໃນໂຮງຮຽນສາມັນກິນນອນຊົນເຜົ່າ;

4. ຕິດຕາມ ແລະ ກວດກາຕົວເລກນັກຮຽນ ແລະ ແຜນພັດທະນາໂຮງຮຽນສາມັນກິນນອນຊົນເຜົ່າປະຈໍາປີ;

5. ຮຽກເຊີນໂຮງຮຽນສາມັນກິນນອນຊົນເຜົ່າ ແລະ ພາກສ່ວນກ່ຽວຂ້ອງເຂົ້າຮ່ວມກອງປະຊຸມຖອດຖອນບົດຮຽນປະຈໍາປີ ຫຼື ວິສາມັນ ກ່ຽວກັບການຈັດຕັ້ງປະຕິບັດວຽກງານຄຸ້ມຄອງ-ບໍລິຫານ ແລະ ວຽກງານວິຊາການ ຂອງໂຮງຮຽນສາມັນກິນນອນຊົນເຜົ່າ;

6. ສ້າງຄວາມເຂັ້ມແຂງດ້ານວິຊາການ ແລະ ດ້ານການຄຸ້ມຄອງ-ບໍລິຫານໃຫ້ພະນັກງານ-ລັດຖະ ກອນ ແລະ ຄູສອນໃນໂຮງຮຽນສາມັນກິນນອນຊົນເຜົ່າ;

7. ຊີ້ນໍາ ແລະ ນໍາພາ ທົດລອງຂະຫຍາຍສາມັນວິຊາຊີບໃນໂຮງຮຽນສາມັນກິນນອນຊົນເຜົ່າ ເພື່ອໃຫ້ນັກຮຽນຜູ້ທີ່ບໍ່ສາມາດສືບຕໍ່ຮຽນການສຶກສາຊັ້ນສູງຂຶ້ນໄປ ໃຫ້ມີວິຊາຊີບຕິດຕົວ, ຊ່ວຍຄອບຄົວ ແລະ ປະກອບສ່ວນພັດທະນາເສດຖະກິດ-ສັງຄົມຂອງຊາດ;

8. ຍົກເວັ້ນຄ່າລົງທະບຽນການຮຽນ, ຄ່າທໍານຽມທັງໃນ ແລະ ນອກຫຼັກສູດ ແລະ ອໍານວຍຄວາມສະດວກເງິນເບ້ຍລ້ຽງຢ່າງຕໍ່ເນື່ອງ ໃຫ້ແກ່ນັກຮຽນທີ່ຮຽນຈົບຈາກໂຮງຮຽນສາມັນກິນນອນຊົນເຜົ່າໃນການຮຽນຕໍ່ວິຊາຊີບ ແລະ ການສຶກສາຊັ້ນສູງ;

9. ຕິດຕາມ ກວດກາ ແລະ ປະເມີນການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງ-ບໍລິຫານ ແລະ ວຽກງານວິຊາການຂອງໂຮງຮຽນສາມັນກິນນອນຊົນເຜົ່າທີ່ຂຶ້ນກັບກະຊວງ, ແຂວງ, ເມືອງ ແລະ ໂຮງຮຽນ ເພື່ອຮັບປະກັນຄວາມຍຸດຕິທໍາ, ໂປ່ງໃສ ແລະ ກວດສອບໄດ້;

10. ສ້າງລະບົບຕິດຕາມ ແລະ ຖານຂໍ້ມູນພື້ນຖານຂອງນັກຮຽນທີ່ຈົບຈາກໂຮງຮຽນສາມັນກິນນອນຊົນເຜົ່າທີ່ໄປຮຽນຕໍ່ການສຶກສາຊັ້ນສູງ ແລະ ການອອກປະກອບອາຊີບສ່ວນບຸກຄົນ;

11. ລະດົມການຊ່ວຍເຫຼືອລ້າ ທີ່ບໍ່ມີຂໍ້ຜູກມັດຈາກທຸກພາກສ່ວນໃນສັງຄົມ ລວມທັງພາກລັດ, ເອກະຊົນ, ອົງການຈັດຕັ້ງທາງສັງຄົມ ແລະ ອົງການຈັດຕັ້ງສາກົນ ເພື່ອຊ່ວຍເຫຼືອໂຮງຮຽນສາມັນກິນນອນຊົນເຜົ່າ;

12. ລາຍງານວຽກງານຂອງໂຮງຮຽນສາມັນກິນນອນຊົນເຜົ່າຢ່າງຮອບດ້ານ ໃຫ້ຂັ້ນເທິງຂອງຕົນ ແລະ ຄະນະກໍາມາທິການບັນດາເຜົ່າ, ສະພາແຫ່ງຊາດ ຊາບເປັນໄລຍະ ແລະ ປະຈໍາປີ;

13. ປະຕິບັດໜ້າທີ່ ແລະ ນໍາໃຊ້ສິດອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 24 ໜ້າທີ່ ແລະ ຂອບເຂດສິດຂອງພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ**

ພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ ມີໜ້າທີ່ ແລະ ຂອບເຂດສິດ ດັ່ງນີ້:

1. ຊີ້ນໍາ ແລະ ນໍາພາ ວຽກງານ ແນວຄິດການເມືອງ, ການຄຸ້ມຄອງ-ບໍລິຫານ ແລະ ວິຊາການຂອງໂຮງຮຽນສາມັນກິນນອນຊົນເຜົ່າທີ່ຂຶ້ນກັບແຂວງ ຫຼື ເມືອງ ລວມທັງໂຮງຮຽນສາມັນກິນນອນຊົນເຜົ່າປະຈໍາພາກ ຕາມລະບຽບການ;

2. ເຂົ້າຮ່ວມ, ໃຫ້ຄໍາປຶກສາ ແລະ ແນະນໍາ ກ່ຽວກັບການຜັນຂະຫຍາຍບັນດານິຕິກໍາໄປສູ່ພາກປະຕິບັດຕົວຈິງ;

3. ສະໜອງການສຶກສາ, ອະນຸມັດງົບປະມານ (ເງິນບໍລິຫານໂຮງຮຽນ, ເງິນເບ້ຍລ້ຽງ ແລະ ເງິນນະໂຍບາຍຕ່າງໆ) ໃຫ້ນັກຮຽນໃນໂຮງຮຽນສາມັນກິນນອນຊົນເຜົ່າ;

4. ຊີ້ນໍາ ແລະ ນໍາພາ ການສ້າງລະບົບຕິດຕາມການຮຽນ, ການຈັດບຸລິມະສິດໃນການສັບຊ້ອນຕົວເລກໃຫ້ນັກຮຽນຊົນເຜົ່າເຂົ້າຮຽນຕໍ່ວິຊາຊີບ, ການສຶກສາຊັ້ນສູງ ຢູ່ພາຍໃນ ແລະ ຕ່າງປະເທດ ໂດຍຜູກພັນດ້ວຍສັນຍາ ຫຼັງຈາກຈົບການສຶກສາໃຫ້ກັບຄືນມາປະຕິບັດໜ້າທີ່ໃນທ້ອງຖິ່ນ;

5. ສ້າງຂີດຄວາມສາມາດດ້ານວິຊາການ, ການຄຸ້ມຄອງ-ບໍລິຫານ ແລະ ຊຸກຍູ້ສົ່ງເສີມໃຫ້ພະນັກງານ-ລັດຖະກອນ, ຄູໃນໂຮງຮຽນສາມັນກິນນອນຊົນເຜົ່າເຂົ້າຮ່ວມທັດສະນະສຶກສາ ຢູ່ພາຍໃນ ແລະ ຕ່າງປະເທດ;

6. ຕິດຕາມ, ກວດກາ, ການປະຕິບັດນະໂຍບາຍ, ການແກ້ໄຂບັນຫາ ແລະ ການຕັດສິນບັນຫາທີ່ເກີດຂຶ້ນໃນໂຮງຮຽນສາມັນກິນນອນຊົນເຜົ່າຢ່າງໃກ້ຊິດ;

7. ລະດົມການຊ່ວຍເຫຼືອລ້າ ທີ່ບໍ່ມີຂໍ້ຜູກມັດຈາກທຸກພາກສ່ວນໃນສັງຄົມ ລວມທັງພາກລັດ, ເອກະຊົນ, ອົງການຈັດຕັ້ງທາງສັງຄົມ ແລະ ອົງການຈັດຕັ້ງສາກົນ ເພື່ອຊ່ວຍເຫຼືອໂຮງຮຽນສາມັນກິນນອນຊົນເຜົ່າ;

8. ຊີ້ນຳ ແລະ ນຳພາ ໂຮງຮຽນ ສ້າງຖານຂໍ້ມູນນັກຮຽນຊົນເຜົ່າ ທີ່ກຳລັງຮຽນຢູ່ໃນໂຮງຮຽນສາມັນກິນນອນຊົນເຜົ່າແລະ ນັກຮຽນຊົນເຜົ່າທີ່ຈົບຊັ້ນ ມ4 ແລະ ມ7 ທີ່ສືບຕໍ່ຮຽນວິຊາຊີບ, ການສຶກສາຊັ້ນສູງ ແລະ ການອອກໄປປະກອບອາຊີບສ່ວນຕົວຂອງທຸກໆສົກຮຽນ;

9. ຕິດຕາມ, ກວດກາ, ປະເມີນ ແລະ ສະຫຼຸບລາຍງານການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງ-ບໍລິຫານ ແລະ ວຽກງານວິຊາການຂອງໂຮງຮຽນສາມັນກິນນອນຊົນເຜົ່າ ປະຈຳພາກຮຽນ, ປະຈຳປີ ຫຼື ຕາມກໍລະນີ ໃຫ້ຂັ້ນເທິງຂອງຕົນຊາບ;

10.ປະຕິບັດໜ້າທີ່ ແລະ ນຳໃຊ້ສິດອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 25 ໜ້າທີ່ ແລະ ຂອບເຂດສິດ ຂອງຫ້ອງການສຶກສາທິການ ແລະ ກິລາເມືອງ, ເທດສະບານ, ນະຄອນ.**

ໜ້າທີ່ ແລະ ຂອບເຂດສິດ ຂອງຫ້ອງການສຶກສາທິການ ແລະ ກິລາເມືອງ, ເທດສະບານ, ນະຄອນ ມີດັ່ງນີ້:

1. ເຜີຍແຜ່ວຽກງານການສຶກສາ ແລະ ຊຸກຍູ້ທຸກພາກສ່ວນໃນການຈັດຕັ້ງປະຕິບັດ ໃຫ້ໄປຕາມແຜນພັດທະນາການສຶກສາ ແລະ ກິລາ ໃນແຕ່ລະໄລຍະ;

2. ຊຸກຍູ້, ສົ່ງເສີມ ແລະ ສ້າງໂອກາດໃຫ້ເດັກຊົນເຜົ່າ, ເດັກກຳພ້າ, ກຳພອຍ ຈາກຄອບຄົວທຸກຍາກໃນເຂດຫ່າງໄກສອກຫຼີກ ທີ່ຮຽນຈົບຊັ້ນປະຖົມສຶກສາເຂົ້າຮຽນຕໍ່ໃນໂຮງຮຽນສາມັນກິນນອນຊົນເຜົ່າ;

3. ສ້າງເງື່ອນໄຂ, ອຳນວຍຄວາມສະດວກ ແລະ ສະໜອງການສຶກສາທີ່ມີຄຸນນະພາບ ໃຫ້ນັກຮຽນຊົນເຜົ່າ;

4. ລະດົມທຶນຊ່ວຍເຫຼືອລ້າຈາກທຸກພາກສ່ວນໃນສັງຄົມ ລວມທັງພາກລັດ, ພາກເອກະຊົນ, ການຈັດຕັ້ງທາງສັງຄົມ ແລະ ອົງການຈັດຕັ້ງສາກົນ;

5. ປະຕິບັດໜ້າທີ່ ແລະ ນຳໃຊ້ສິດອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 26 ເນື້ອໃນການກວດກາ**

ການກວດກາໂຮງຮຽນສາມັນກິນນອນຊົນເຜົ່າ ມີເນື້ອໃນຕົ້ນຕໍດັ່ງນີ້:

1. ການປະຕິບັດຂໍ້ຕົກລົງ, ນະໂຍບາຍ ແລະ ລະບຽບການ ຂອງໂຮງຮຽນສາມັນກິນນອນຊົນເຜົ່າ;

2. ການປະຕິບັດໜ້າທີ່ຂອງຄະນະອຳນວຍການ, ພະນັກງານ-ລັດຖະກອນ ແລະ ຄູ ໃນໂຮງຮຽນສາມັນກິນນອນຊົນເຜົ່າ;

3. ກວດກາການນຳໃຊ້ເງິນບໍລິຫານໂຮງຮຽນ, ການນຳໃຊ້ເງິນເບັຍລ້ຽງ ແລະ ນະໂຍບາຍການຮຽນຂອງນັກຮຽນຊົນເຜົ່າ;

4. ກວດກາການຄຸ້ມຄອງຊັບສິນຂອງໂຮງຮຽນ.

**ມາດຕາ 27 ຮູບການການກວດກາ**

ການກວດກາວຽກງານຂອງໂຮງຮຽນສາມັນກິນນອນຊົນເຜົ່າ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມປົກກະຕິ ຊຶ່ງແມ່ນການກວດກາຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ;

2. ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນການກວດກາ ນອກແຜນການ ເມື່ອເຫັນວ່າມີຄວາມຈໍາເປັນ ໂດຍແຈ້ງເປົ້າໝາຍຖືກກວດກາຮູ້ລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງເປັນການກວດກາແບບຮີບດ່ວນໂດຍບໍ່ໄດ້ແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ລວງໜ້າ.

## ໝວດທີ 7
## ນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 28 ນະໂຍບາຍຕໍ່ຜູ້ທີ່ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຈະໄດ້ຮັບ ການຍ້ອງຍໍ ຫຼື ນະໂຍບາຍ ຕາມລະບຽບການ.

**ມາດຕາ 29 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດ ຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການກ່າວເຕືອນ, ສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ຕາມກໍລະນີເບົາ ຫຼື ໜັກ.

## ໝວດທີ 8
## ບົດບັນຍັດສຸດທ້າຍ

**ມາດຕາ 30 ງົບປະມານ ແລະ ຕາປະທັບ**

ໂຮງຮຽນສາມັນກົນນອນຊົນເຜົ່າ ມີງົບປະມານຮັບໃຊ້ວຽກງານຂອງຕົນ ຊຶ່ງໄດ້ມາຈາກງົບປະມານຂອງລັດ, ການຊ່ວຍເຫຼືອ ຂອງຊຸມຊົນ, ບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ, ການຄຸ້ມຄອງ ແລະ ນໍາໃຊ້ງົບປະມານ ແມ່ນປະຕິບັດຕາມກົດໝາຍ ແລະ ລະບຽບການ;

ໂຮງຮຽນສາມັນກົນນອນຊົນເຜົ່າ ມີຕາປະທັບຂອງຕົນ ເພື່ອຮັບໃຊ້ເຂົ້າໃນວຽກງານທາງລັດຖະການ.

**ມາດຕາ 31 ການຈັດຕັ້ງປະຕິບັດ**

ມອບໃຫ້ສູນການສຶກສາຮຽນຮ່ວມ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຜັນຂະຫຍາຍຂໍ້ຕົກລົງສະບັບນີ້ ອອກເປັນລະບຽບການສະເພາະ ພາຍໃນໂຮງຮຽນສາມັນກົນນອນຊົນເຜົ່າໃຫ້ໄດ້ຮັບໝາກຜົນ.

ໃຫ້ຫ້ອງການກະຊວງ, ບັນດາກົມ, ອົງການທຽບເທົ່າ, ສະຖາບັນ, ສູນ, ພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ, ເທດສະບານ, ນະຄອນ, ສະຖານການສຶກສາ, ອົງການປົກຄອງທ້ອງຖິ່ນທຸກຂັ້ນ, ໂຮງຮຽນສາມັນກົນນອນຊົນເຜົ່າທຸກແຫ່ງ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມ ຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ ແລະ ໃຫ້ໄດ້ຮັບຜົນດີ.

**ມາດຕາ 32 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

ຂໍ້ຕົກລົງສະບັບນີ້ໃຊ້ປ່ຽນແທນຂໍ້ຕົກລົງ ວ່າດ້ວຍ ສະບັບເລກທີ 1489/ສສກ.ອປ; 1490/ສສກ.ອປ ແລະ 1491/ສສກ.ອປ, ລົງວັນທີ 28 ເມສາ 2014.

**ລັດຖະມົນຕີ**

ຮສ.ປອ ພຸດ ສິມມາລາວົງ